**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

LFX ບໍລິສັດ ຕະຫຼາດແລກປ່ຽນ
ເງິນຕາຕ່າງປະເທດລາວ ຈຳກັດ

ເລກທີ...94.../ຕລຕ
ນະຄອນຫຼວງວຽງຈັນ, ວັນທີ...19...ມິຖຸນາ 2025

# ແຈ້ງການ

**ເຖິງ: ບັນດາ ທະນາຄານສະມາຊິກ ຂອງ ຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ;**
**ທ່ານຜູ້ອຳນວຍການ ບໍລິສັດ ລາວຄອມເມັກຈຳກັດ ແລະ**
**ທ່ານຜູ້ອຳນວຍການ ບໍລິສັດ LAPNet ຈຳກັດ ທີ່ນັບຖື**

**ເລື່ອງ: ການເປີດໃຫ້ບໍລິການແລກປ່ຽນຊື້-ຂາຍເງິນຕາຜ່ານ LFX ໃນວັນເສົາ ແລະ ວັນອາທິດ**

- ອີງຕາມ ຂໍ້ຕົກລົງວ່າດ້ວຍຕະຫຼາດແລກປ່ຽນເງິນຕາຕ່າງປະເທດ ສະບັບເລກທີ 1161/ທຫລ, ລົງວັນທີ 29 ຕຸລາ 2024;
- ອີງຕາມ ກົດລະບຽບ ຂອງ ບໍລິສັດ ຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ ຈຳກັດ ສະບັບເລກທີ 20/ຕລຕ, ລົງວັນທີ 20 ກຸມພາ 2025;
- ອີງຕາມ ໜັງສືແຈ້ງການຈາກ ກົມນະໂຍບາຍເງິນຕາ, ທຫລ ກ່ຽວກັບ ການຂະຫຍາຍວັນໃຫ້ບໍລິການຂອງ ຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ ສະບັບເລກທີ 705/ກນງ, ລົງວັນທີ 19 ມິຖຸນາ 2025.

ບໍລິສັດ ຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ ຈຳກັດ (ບໍລິສັດ ຕລຕ) ຂໍຖືເປັນກຽດແຈ້ງມາຍັງທ່ານ ຊາບວ່າ ຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ (LFX) **ຈະເປີດໃຫ້ບໍລິການ ຊື້-ຂາຍເງິນຕາ ໃນວັນເສົາ ແລະ ວັນອາທິດ ແຕ່ເວລາ 9:00 ຫາ 15:00 ໂມງ ເລີ່ມແຕ່ວັນເສົາ, ວັນທີ 21/06/2025 ເປັນຕົ້ນໄປ** ເພື່ອອຳນວຍຄວາມສະດວກ ແລະ ຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງຜູ້ໃຊ້ບໍລິການໃຫ້ໄດ້ຫຼາຍຂຶ້ນກວ່າເກົ່າ, ເຊິ່ງຜູ້ໃຊ້ບໍລິການສາມາດແລກປ່ຽນຊື້-ຂາຍເງິນຕາ ຜ່ານ LFX ໄດ້ຕາມວັນ ແລະ ເວລາດັ່ງກ່າວເປັນປົກກະຕິ ຜ່ານລະບົບ Mobile Banking ແລະ Internet Banking ຂອງ ທະນາຄານທີ່ເຂົ້າຮ່ວມໂຄງການ. ສະນັ້ນ ຈຶ່ງແຈ້ງມາຍັງທ່ານ ເພື່ອກະກຽມຄວາມພ້ອມຮອບດ້ານ ເປັນຕົ້ນແມ່ນດ້ານເຕັກນິກລະບົບ ແລະ ບຸກຄະລາກອນ ເພື່ອຮັບປະກັນການດຳເນີນງານມີປະສິດທິພາບສູງ ພ້ອມທັງອຳນວຍຄວາມສະດວກໃຫ້ກັບລູກຄ້າຂອງຕົນໃຫ້ສາມາດໃຊ້ບໍລິການຕາມວັນເວລາຂ້າງເທິງດ້ວຍ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານ ເພື່ອຊາບ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດຕາມທາງຄວນດ້ວຍ.

**ຜູ້ອຳນວຍການ**

ແຫ່ງ ສາທາລະນະ ປະຊາທິປະໄຕ ບໍລິສັດ ຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ ຈຳກັດ Lao Foreign Exchange Co., Ltd ນະຄອນ ຫຼວງ ວຽງຈັນ

**ສີສະຫວາດ ດວງສະຫວັນ**